# ໂຮງຮຽນວັນອາທິດ

## ວັນອາທິດ ທີ 14 ກໍລະກະດາ 2019 (07- 14 - 2019 )

# ການຈັດຕຽມແລະການໃຫ້ກຳລັງໃຈຄົນອື່ນ

*ສິ່ງໃດທີ່ທ່ານສົນໃຈຮຽນເພາະບາງຄົນສະແດງຕໍ່ທ່ານວ່າເຮັດແບບໃດ?.*

**ຈຸດສຳຄັນໃນບົດຮຽນ**: ມີບາງຄົນຊ່ວຍທ່ານໃຫ້ເຕີບໃຫ່ຍໃນພຣະຄຣິດ ຈົ່ງເຮັດຢ່າງດຽວກັນນັ້ນກັບຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

"ແມ່ຂອງຂ້າພະເຈົ້າບອກຂ້າພະເຈົ້າໃຫ້ເປີດໃຈແຕ່ງງານໃໝ່," ທອມ ໃຫ້ຄວາມເຫັນ. ນັ້ນບໍ່ເປັນເຮື່ອງປລາດໃຈ, ໃນເມື່ອຂ້າພະເຈົ້າຮູ້ວ່າ ທອມ ເຫງົາຫຼັງຈາກພັນລະຍາວັຍສີ່ສິບເກົ້າປີຂອງລາວໄດ້ເສັຽຊີວິດ. ແມ່ນທັງທີ່ເຮັດໃຫ້ປລາດໃຈທີຂ້າພະເຈົ້າໄດ້ຍິນວ່າລາວຍັງເປັນຜູ້ໃຫ້ຄຳປຶກສາ; ນອກຈາກນີ້, ລາວມີອາຍຸເຈັດສິບປາຍປີ.ແລະການໃຫ້ຄຳປຶກສາຂອງລາວໃຫ້ກັບວັຍເກົ້າສິບປີແກ່ກ່ວາຕົວລາວເອງ.

ທອມ ແມ່ນນຶ່ງໃນວິຣະບູຣຸດໃນຄວາມເຊື່ອຂອງຂ້າພະເຈົ້າ. ຂ້າພະເຈົ້າບໍ່ພຽງແຕ່ເປັນເພື່ອນ, ແຕ່ຍິ່ງໄປກວ່ານັ້ນຄືເປັນຜູ້ໃຫ້ຄຳປຶກສາແລະຕົ້ນແບບຄວາມເຊື່ອ. ຊີວິດການອະທິຖານຂອງລາວມີຣິດອຳນາດສູງ, ແລະຄວາມຮັບຜິດຊອບໃນຄວາມຢຳເກັງພຣະເຈົ້າສູງ. ລາວເດີນໄປກັບພຣະເຈົ້າດ້ວຍຄວາມຈິງຮັກພັກດີ ຂ້າພະເຈົ້າໄດ້ເຊີນລາວໄປໃນຫ້ອງຮຽນສັມມະນາທຸກໆພາກຮຽນ ເພາະຂ້າພະເຈົ້າຕ້ອງການໃຫ້ນັກຮຽນຂອງຂ້າພະເຈົ້າຮູ້ຈັກລາວ,

ຄຳປຶກສາຂອງ ທອມ ລົງທຶນໃຫ້ລາວ. ເປັນລຳດັບ, ທອມ ຍ່າງຄຽງຂ້າງຂ້າພະເຈົ້າໃນຖານະຜູ້ໃຫ້ຄຳປຶກສາຂອງຂ້າພະເຈົ້າ. ເວລານັ້ນຂ້າພະເຈົ້າໄດ້ທຸ້ມເທໄປຍັງນັກສຶກສາຜູ້ທີ່ຂ້າພະເຈົ້າເປັນຜູ້ໃຫ້ຄຳປຶກສາ. ຜ່ານຄວາມສັມພັນນີ້, ຂ້າພະເຈົ້າໄດ້ສອນເຂົາອັນໃດທີ່ ທອມ ໄດ້ສອນຂ້າພະເຈົ້າ ແລະຂ້າພະເຈົ້າໄວ້ໃຈເຂົາວ່າເຂົາຈະສອນຄົນອື່ນຕໍ່ຄືກັນ. ການໃຫ້ຄຳປຶກສາ. ຄົນນຶ່ງຈະໄດ້ອີກຄົນນຶ່ງ.

ການສັງເກດເບິ່ງຂອງເຮົາໃນອາທິດນີ້ ທີ່ຄວາມສັມພັນຂອງໂປໂລແລະຕີໂມທຽວ ຈະຊ່ວຍເຮົາກຽມພ້ອມໃຫ້ຄຳປຶກສາກັບຕົວເອງ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

### 1. <u>2 ຕີໂມທຽວ 2: 1- 2</u>

*1 ເຫດສັນນັ້ນ ລູກຂອງເຮົາເອີຍ, ຈົ່ງເຂັ້ມແຂງຂຶ້ນດ້ວຍພຣະຄຸນຊຶ່ງມີຢູ່ໃນພຣະຄຣິດຄືພຣະເຢຊູ. 2 ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ໜ້າພະຍານຫຼາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ.*

ການເປັນຜູ້ໃຫ້ຄຳປຶກສາແມ່ນກ່ຽວກັບເຮື່ອງຄວາມມີຄວາມສຳພັນ, ແຕ່ຄວາມສຳພັນເຫຼົ່ານີ້ບໍ່ໄດ້ເກີດຂຶ້ນໂດຍບັງເອີນ. ມັນເກີດຂຶ້ນເພາະພວກເຮົາເຝົ້າເບິ່ງດ້ວຍຄວາມຕັ້ງໃຈເພາະວ່າພຣະເຈົ້າເຮັດໃຫ້ຈຸດມາພົບກັນແລະສ້າງຄວາມສົນໃຈເປັນມິດຕະພາບໄປທີ່ພຣະເຈົ້າ.

ກ່ອນໂປໂລປ່ຽນແປງຄວາມເຊື່ອຖືມາເປັນຄຣິສຕຽນ, ເພິ່ນເປັນຜູ້ກໍ່ກວນທີ່ຫົວຣຸນແຮງ( ຊື່ໂຊໂລໃນເວລານັ້ນ) ເປັນຜູ້ທີ່ຈັບຄຣິສຕຽນແລະສົ່ງເຂົາໄປຂ້າ. ຂະນະທີ່ໂຊໂລກຳລັງເດີນທາງໄປດາມາເຊເພື່ອໄປຈັບຄຣິສຕຽນ, ພຣະ

ເຈົ້າໄດ້ດຶງຄວາມສົນໃຈໂດຍເຮັດໃຫ້ໂຊໂລລົ້ມລົງເທິງພື້ນດິນດ້ວຍແສງສວ່າງ. ໃນຕອນນັ້ນ, ໂຊໂລໄດ້ເຊື່ອແລະໄດ້ຮັບຄວາມພົ້ນຢ່າງກະທັນຫັນ ( ກິດຈການ 9: 1-19). ຂັ້ນຕອນແລກໃນການເປັນຜູ້ໃຫ້ຄໍາປຶກສາແມ່ນການຫັນອອກຈາກຄວາມບາບຂອງເພິ່ນຢ່າງຕັ້ງໃຈແລະເຊື່ອວາງໃຈໃນພຣະເຢຊູຜູ້ຊ່ວຍທ່ານໃຫ້ພົ້ນ. ການສ້າງຄວາມສໍາພັນເປັນສິ່ງທີ່ຕ້ອງກະທໍາຫຼາຍກວ່າສິ່ງອື່ນໃດ.

ໃນພາຍຫຼັງ, ການເດີນທາງປະກາດຂ່າວປະເສີດຄັ້ງທີສອງ ເພິ່ນໄດ້ເດີນທາງຜ່ານເມືອງລີຊະທາ, ໂປໂລໄດ້ພົບຕີໂມທຽວ, ເປັນຊາຍໜຸ່ມທີ່ມີຊື່ສຽງດີໃນທ່າມກາງພີ່ນ້ອງທັງຫຼາຍ (ກິດຈການ 16:1- 2). ແມ່ແລະແມ່ເຖົ້າຂອງຕີໂມທຽວເປັນຄົນທີ່ເຊື່ອໃນພຣະເຈົ້າ( 2ຕີໂມທຽວ 1:5; 3: 14-17), ແຕ່ພວກເຮົາບໍ່ຮູ້ວ່າພໍ່ຂອງລາວເປັນຊາວກຣີກທີ່ໄດ້ຕິດຕາມພຣະຄຣິດ. ຊຶ່ງກໍເປັນໄປໄດ້, ໂດຍຄວາມເປັນຈິງ, ໂປໂລໄດ້ນໍາຕີໂມທຽວໃຫ້ມາຕິດຕາມພຣະຄຣິດໃນຕອນອອກໄປປະກາດເທື່ອທີນຶ່ງ( ກິດຈການ 14:5- 7), ແລະເພິ່ນນຍັງໄດ້ຍິນຂ່າວທີດີຂອງຊາຍຄົນນີ້ສເມີ. ໂປໂລຈະຕ້ອງເຫັນຄວາມເປັນໄປໄດ້ໃນຕີໂມທຽວ. ເພິ່ນຕ້ອງການຕີໂມທຽວໃຫ້ຢູ່ທີມຂອງເພິ່ນ, ດັ່ງນັ້ນເພິ່ນຈຶ່ງສ້າງຄວາມສໍາພັນກັບລາວຢ່າງຕັ້ງໃຈ. ເພິ່ນໃຫ້ໂອກາດຕີໂມທຽວດັ່ງທີ່ເຫັນໃນຕອນຂຶ້ນຕົ້ນຈົດໝາຍ( 2 ໂກຣິນໂທ1:1; ຟີລິບປອຍ1:1; ໂກໂລຊາຍ 1:1; 1 ເທຊະໂລນິກ 1:1; 2 ເທຊະໂລນິກ 1:1; ຟີເລໂມນ1). ຕີໂມທຽວຍັງເປັນຜູ້ໄປສໍາຣວດເບິ່ງຄຣິສຕຽນທີ່ພວກເພິ່ນນໍາມາເຊື່ອ. ຕອນທ້າຍ, ໂປໂລສັ່ງໃຫ້ຕີໂມທຽວມາພົບໃນໄວໆເມື່ອເພິ່ນຮູ້ວ່າເພິ່ນປະເຊີນກັບຄວາມຕາຍ ( 2 ຕີໂມທຽວ 4:9).

ຈົດໝາຍສະບັບທີສອງໂປໂລຂຽນໄປເຖິງຕີໂມທຽວອາດຈະເປັນການຮຽກຮ້ອງຂອງໂປໂລ “ ຄວາມຕ້ອງການອັນສຸດທ້າຍແລະພິນັຍກັມ” ຄວາມຮຽກຮ້ອງຕ້ອງການອັນສຸດທ້າຍຕໍ່ຕີໂມທຽວແມ່ນໃຫ້ສອນພຣະຄໍາດ້ວຍຄວາມສັດຊື່. ໂປໂລຮ້ອງຕີໂມທຽວວ່າ “ລູກຊາຍຂອງເຮົາ” ສະແດງວ່າເພິ່ນເອງເປັນບິດາທາງຄວາມເຊື່ອຂອງຕີໂມທຽວ. ເພິ່ນຮັກຕີໂມທຽວຄືກັບລູກຊາຍ, ແລະຈິດໃຈຂອງພວກເພິ່ນຮ່ວມເປັນນຶ່ງດຽວໃນການປະກາດຂ່າວປະເສີດ, ສ້າງສາວົກ, ແລະກໍ່ຕັ້ງຄຣິສຕະຈັກ. ໂປໂລອາດຈະວາງແຜນການຕາຍຂອງເພິ່ນເອງລ່ວງໜ້າໂດຍຮູ້ວ່າວ່າຕີໂມທຽວຈະສືບຕໍ່ທໍາໜ້າທີ່ຂອງເພິ່ນ. ໂປໂລທ້າທາຍຕີໂມທຽວ:

- **ຈົ່ງເຂັ້ມແຂງໃນພຣະຄຸນ.** ໂປໂລຮູ້ຈາກການເດີນທາງຂອງເພິ່ນເອງວ່າພຣະເຈົ້າຈະໃຫ້ຄວາມເຂັ້ມແຂງທັງໝົດກັບຕີໂມທຽວຕາມທີ່ລາວຕ້ອງການ.
- **ສິດສອນຄົນອື່ນທັງໝົດຕາມທີ່ລາວໄດ້ຮໍ່າຮຽນມາຈາກໂປໂລ.** ຄົນຈໍານວນຫຼວງຫຼາຍໄດ້ຮຽນຈາກໂປໂລ, ແລະເຂົາໄດ້ຢືນຢັນຄວາມໄວ້ວາງໃຈໃນການສິດສອນຂອງເພິ່ນ. ໂປໂລຄາດຫວັງໃຫ້ຕີໂມທຽວຊອກຫາຄົນທີ່ມີຄວາມເຊື່ອນໍາພາແລະສັ່ງສອນເຂົາຕາມທີ່ລາວໄດ້ຮຽນມາ.
- **ຊຸກຍູ້ເຂົາສິດສອນຄົນລຸ້ນຫຼັງໃຫ້ເປັນຜູ້ຕິດຕາມ.** ໂປໂລສິດສອນຕີໂມທຽວ. ຕີໂມທຽວສິດສອນຄົນອື່ນ. ລູກສິດຂອງລາວກໍສິດສອນຄົນລຸ້ນຫຼັງໃຫ້ເປັນຜູ້ຕິດຕາມ. ນັ້ນເປັນວິທີທາງທີ່ຖືກຕ້ອງຂອງຜູ້ໃຫ້ຄໍາປຶກສາທີ່ຈະຕ້ອງເຮັດ!

ຄິດເບິ່ງກ່ຽວກັບບຸກຄົນຜູ້ທີ່ທຸ້ມເທໃຫ້ກັບທ່ານ. ເຖິງແມ່ນວ່າຖ້າບໍ່ມີໃຜຮັບໃຊ້ເປັນເໝືອນຫ້ອງການໃຫ້ຄໍາປຶກສາກັບທ່ານ, ຄົນອື່ນທີ່ເປັນຕົ້ນແບບຊີວິດຄຣິສຕຽນຕໍ່ທ່ານ. ເຊັ່ນດຽວກັນມັນອາດເປັນໄປໄດ້ພຣະເຈົ້າໄດ້ຈັດໃຫ້ມີບາງຄົນໃນຊີວິດຂອງທ່ານເພື່ອທ່ານຈະໃຫ້ຄໍາປຶກສາ ຈົ່ງພະຍາຍາມຊອກເບິ່ງແລະອະທິຖານ.

## 2. <u>2 ຕີໂມທຽວ 3: 10-13</u>

*10 ບັດນີ້ເຈົ້າກໍໄດ້ຕິດຕາມເຮົາໃນດ້ານຄໍາສອນ, ກິຣິຍາ, ຄວາມໝຸ້ງໝາຍ, ຄວາມເຊື່ອ, ຄວາມພາກພຽນ, ຄວາມຮັກ, ຄວາມໜັກແໜ້ນໝັ້ນຄົງ ແລະການຖືກຂົ່ມເຫັງກັບການທົນທຸກລໍາບາກຕ່າງໆ ຂອງເຮົາຄືສິ່ງທີ່ໄດ້ເກີດແກ່ເຮົາໃນເມືອງອັນຕີໂອເຊັຽ, ໃນເມືອງອີໂກນີອົນ, ແລະເມືອງລີຊະທາ ການຂົ່ມເຫັງຕ່າງໆທີ່ເຮົາໄດ້ອົດທົນນັ້ນ ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດດຶງເຮົາອອກຈາກສິ່ງເຫຼົ່ານັ້ນທັງໝົດ. ແທ້ຈິງ, ບັນດາຄົນທີ່ປາຖນາຈະດໍາເນີນຊີວິດຄຣິສຕຽນເປັນຄົນ*

*ນັບຖືພຣະເຈົ້າຢ່າງຖືກຕ້ອງກໍ່ຈະຖືກຂົ່ມເຫັງ. ແຕ່ຄົນຊົ່ວຮ້າຍແລະຄົນປອມຕົວຈະກຳເລີບທະວີຂຶ້ນລໍ້ລວງຄົນອື່ນໃຫ້ຫຼົງແລະຕົວເຂົາເອງກໍຖືກລໍ້ລວງເໝືອນກັນ.*

ການເປັນຜູ້ໃຫ້ຄຳປຶກສາແມ່ນກ່ຽວກັບການແລກປ່ຽນປະສົບການຊີວິດຮ່ວມກັນ. ມັນເປັນການເດີນທາງຮ່ວມກັນ, ໃຫ້ການໜູນໃຈເຊິ່ງກັນແລະກັນໃນເວລາຍາກລຳບາກແລະສເລີມສລອງຮ່ວມກັນໃນເມື່ອມີຊັຍຊະນະ. ມັນແມ່ນຜູ້ທີ່ໄດ້ຮັບການຊ່ວຍເຫຼືອໃຫ້ຄຳປຶກສາເດີນໃນທາງດຽວກັນນັບທັງຜູ້ໃຫ້ຄຳປຶກສາຈົນເຖິງຜູ້ທີ່ຮັບຄຳປຶກສາ ເປັນຜູ້ໃຫ້ຄຳປຶກສາແກ່ຜູ້ອື່ນ. ໃນລະຫວ່າງການເດີນທາງ, ໂປໂລຢືນຢັນວ່າພຣະເຈົ້າເຝົ້າເບິ່ງເພິ່ນແລະຊ່ວຍຊີວິດເພິ່ນອອກຈາກທຸກບັນຫາອຸປະສັກຂອງເພິ່ນ. ຕີໂມທຽວອາດຈະບໍ່ໄດ້ຢູ່ກັບໂປໂລທຸກໆສະຖານະການທີ່ໄດ້ອະທິບາຍໃນບັນທັດນີ້. ແຕ່ລາວໄດ້ເຝົ້າເບິ່ງຊີວິດໂປໂລຢ່າງໃກ້ຊິດ. ໂປໂລຄວນເວົ້າດ້ວຍຄວາມໄວ້ເນື້ອເຊື່ອໃຈວ່າຊີວິດຂອງເພິ່ນມີຄຸນຄ່າໃນການເອົາເປັນແບບຢ່າງ.ສຳລັບເປັນຜູ້ຕິດຕາມພຣະຄຣິດ.

ອັນໃດທີ່ຜູ້ໃຫ້ຄຳປຶກສາເຮັດ:ເຊື້ອເຊີນຄົນອື່ນເຂົ້າມາໃນຊີວິດຂອງເຂົາ: ຈາກນັ້ນກໍສະແດງໃຫ້ເຂົາເຫັນວິຖີຊີວິດທີ່ຕິດຕາມພຣະເຈົ້າຜູ້ທີ່ສັດຊື່ທ່ຽງທັມທີ່ເຝົ້າຮັກສາໂດຍພຣະອົງເອງ. ຜູ້ໃຫ້ຄຳປຶກສາຍັງເອົາໃຈໃສ່ຈັດຕຽມຄົນອື່ນໄວ້ສຳລັບອະນາຄົດຂ້າງໜ້າໂດຍພື້ນຖານບົດຮຽນທີ່ໄດ້ຮຽນມາ. ໂປໂລຕ້ອງການໃຫ້ຕີໂມທຽວຈັດຕຽມວາງແຜນລ່ວງໜ້າສຳລັບການຖືກກໍ່ກວນໂປໂລຮູ້ຜູ້ຢູ່ໃນການດູແລຈະປະເຊີນໜ້າ.

ການຈັດຫາເວລາສຳລັບຄົນອື່ນອາດເປັນງານຍາກທີ່ສຸດຂອງຜູ້ໃຫ້ຄຳປຶກສາ. ພວກເຮົາທັງໝົດແມ່ນໄດ້ພະຍາຍາມເຮັດຫຼາຍສິ່ງໂພດ. ຖ້າເຮົາຈະເພີ້ມເຕີມການຮຽກເອີ້ນນີ້ວ່າເປັນການທຸ້ມເທຊີວິດຂອງເຮົາເຂົ້າໃນຊີວິດໃຜຜູ້ນຶ່ງຄືກັບໂປໂລເຮັດ, ຊຶ່ງສາມາດເຮັດໃຫ້ມີຄວາມຮູ້ສຶກວ່າເປັນການທຳງານຫຼາຍເກີນໄປ.

ໃນອີກດ້ານນຶ່ງ, ພວກເຮົາອາດຈະສູນເສັຽຫຼາຍກວ່າຖ້າພວກເຮົາບໍ່ຍອມເຮັດຢ່າງນີ້. ພວກເຮົາຈະພາດໂອກາດທີ່ຈະຊ່ວຍຄົນອື່ນໄດ້ຮຽນຮູ້ໃນສິ່ງທີ່ພຣະເຈົ້າໄດ້ສອນເຮົາ. ແລະເຮົາຈະບໍ່ເຫັນຜູ້ທີ່ເຊື່ອຮັກພຣະເຢຊູແລະເດີນໄປດ້ວຍຄວາມເຊື່ອສັດທາໃນທ່າມກາງການທົດລອງຂອງເຂົາ. ການເປັນຜູ້ປຶກສາແມ່ນເປັນການດຳລົງຊີວິດຢູ່ຮ່ວມ ທຸກໆສິ່ງ. ຊຶ່ງຈະຕ້ອງໃຊ້ເວລາໃນການລົງທຶນສ້າງຄົນໆ ນຶ່ງຂຶ້ນ, ແຕ່ຈະມີຄຸນຄ່າສູງຕໍ່ຄວາມພະຍາຍາມ.

## 3. <u>2 ຕີໂມທຽວ 3: 14-17</u>

*[14]ແຕ່ຝ່າຍເຈົ້າ, ຈົ່ງດຳເນີນຕໍ່ໄປໃນສິ່ງທີ່ເຈົ້າໄດ້ຮຽນຮູ້ແລ້ວ ແລະໄດ້ເຊື່ອຢ່າງໝັ້ນຄົງເຈົ້າກໍຮູ້ແລ້ວວ່າເຈົ້າໄດ້ຮຽນມາ*
*ຈາກຜູ້ໃດ. [15]ແລະຮູ້ແລ້ວວ່າ ຕັ້ງແຕ່ນ້ອຍມາແລ້ວເຈົ້າກໍຮູ້ພຣະທັມຄັມພີອັນສັກສິດ ຊຶ່ງສາມາດໃຫ້ເຈົ້າມີປັນຍານຳ*
*ເຈົ້າໄປເຖິງຄວາມພົ້ນໄດ້ດ້ວຍທາງຄວາມເຊື່ອໃນພຣະຄຣິດ ຄືພຣະເຢຊູ. [16]ພຣະຄັມພີທຸກຕອນໄດ້ຮັບການຊົງບັນ*
*ດົນໃຈຈາກພຣະເຈົ້າແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ*
*ແລະການອົບຮົມໃນທາງຊອບທັມ. [17]ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການ*
*ດີທຸກຢ່າງ.*

ອາຈານໂປໂລເຂົ້າໃຈຄວາມສຳຄັນການກໍ່ສ້າງພື້ນຖານທີ່ແຂງແກ່ນ. ເພິ່ນອາດເປັນຜູ້ຊ່ວຍໃຫ້ຄຳແນະນຳຂອງຕີໂມທຽວ, ແຕ່ລາວໄດ້ຖືກສ້າງຂຶ້ນບົນພື້ນຖານພຣະວັຈະນະຂອງພຣະເຈົ້າ. ຕີໂມທຽວໄດ້ສືບທອດຄວາມເຊື່ອສັດທາໃນພຣະເຈົ້າຜ່ານທາງແມ່ແລະແມ່ເຖົ້າຂອງລາວ. ແລະເຂົາເຈົ້າໄດ້ສິດສອນລາວຕັ້ງແຕ່ລາວຍັງເປັນເດັກນ້ອຍ. ສຸດທ້າຍພຣະຄຳເຫຼົ່ານັ້ນກໍຊີ້ທາງຕີໂມທຽວໄປຫາພຣະເຢຊູ, ໃນກຸ່ມຄົນນີ້ລາວໄດ້ພົບຄວາມລອດພົ້ນດ້ວຍພຣະຄຸນຜ່ານທາງຄວາມເຊື່ອ.

ຮູ້ວ່າຕີໂມທຽວຈະປະເຊີນໜ້າກັບຄວາມພະຍາຍາມຕໍ່ສູ້ໃນງານພັນທະກິດຂ່າວປະເສີດຂອງລາວ, ໂປໂລໄດ້ກະຕຸ້ນຈິດໃຈລາວໃຫ້ຍຶດໝັ້ນໃນສິ່ງທີ່ລາວໄດ້ຮຽນມາແລະສິ່ງທີ່ລາວໄດ້ ໃນຄຳສັນຍານັ້ນ. ໂປໂລໄດ້ຢືນຢັນວ່າ " ພຣະ

ຄຳທຸກຕອນຖືກດົນໃຈໃຫ້ຂຽນຂຶ້ນໂດຍພຣະເຈົ້າ" ນັ້ນເປັນຄວາມຈິງ, ຊຶ່ງເປັນ " ຄຳເວົ້າຂອງພຣະເຈົ້າ" ຫຼື "ຄຳທີ່ພຣະເຈົ້າໄດ້ເວົ້າອອກມາ"(ຂໍ້16) ໂດຍພຣະວິນຍານບໍຣິສຸດໄດ້ດົນໃຈໃຫ້ຂຽນຂຶ້ນ (2 ເປໂຕ 1: 20-21) ເປັນພຣະຄຳຂອງພຣະເຈົ້າທີ່ບອກຂ່າວໃຫ້ໂລກ. ທີ່ສນັບສນູນ, ທັງເປັນປໂຍດສຳລັບ: ການສອນ, ການຕັກເຕືອນ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທຳ.

ໂດຍການສືບຕໍ່ຄຳສັ່ງ, ຕີໂມທຽວຈະຕ້ອງຮັກສາຕົນໃຫ້ເປັນຄົນສົມບູນແບບທີ່ພຣະເຈົ້າຕ້ອງການໃຫ້ລາວເປັນ. ລາວຈະຕ້ອງຕຽມພ້ອມເຮັດທຸກຂໍ້ຄຳສັ່ງພຣະເຈົ້າ ລາວຈະໃຊ້ເວລາໃນການອ່ານແລະຕິດຕາມຄຳສອນຂອງພຣະເຈົ້າຢ່າງສມ່ຳສເມີ. ຢ່າງໃດກໍຕາມ, ຫາກແຍກອອກຈາກຄຳສັ່ງຂອງພຣະເຈົ້າ, ການທຳງານຂອງຕີໂມທຽວກໍຈະບໍ່ເກີດຜົນດີແລະຂາດສັດທາ.

ການເຕີບໂຕຝ່າຍຈິດວິນຍານໃນຊີວິດຂອງຕີໂມທຽວດ້ວຍການຕິດຕາມການປະຕິບັດຢ່າງນີ້: ຄອບຄົວຂອງລາວລ້ຽງດູລາວດ້ວຍພຣະຄຳຂອງພຣະເຈົ້າ, ແລະຕໍ່ມາໂປໂລກໍ່ສ້າງລາວຂຶ້ນບົນພື້ນຖານນັ້ນ. ພຣະເຈົ້າໃຫ້ກັບຕີໂມທຽວບໍ່ພຽງແຕ່ຄອບຄົວເປັນຈຸດເລີ້ມຕົ້ນແຕ່ຍັງໃຫ້ຜູ້ໃຫ້ຄຳປຶກສາແນະນຳທີ່ດີທີ່ຊ່ວຍນຳທາງລາວ, ພວກເພິ່ນໄດ້ຮຽກຮ້ອງຕີໂມທຽວໃຫ້ເຊື່ອຟັງພຣະສັນຍາ. ເປັນພື້ນຖານການເຕີບໂຕຂອງລາວ, ຕໍ່ຈາກນັ້ນ, ແມ່ນຄວາມເຕັມໃຈຂອງລາວທີ່ຈະເດີນຕິດຕາມພຣະສັນຍາ.

ໂປໂລຮູ້ວ່າຊີວິດຂອງເພິ່ນເອງແມ່ນໃກ້ເຂົ້າມາແລ້ວ. ຍັງອີກບໍ່ນານ, ເພິ່ນໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ( 2 ຕີໂມທຽວ 4:6- 7) ອີກບໍ່ດົນທີ່ເພິ່ນຈະມີຊີວິດຢູ່ຄຽງຂ້າງຊ່ວຍເຫຼືອຕີໂມທຽວໃນການທຳງານຂອງລາວ. ການເປັນຜູ້ຮັບໃຫ້ການປຶກສາຈະເປັນຕົວລາວເອງ. ໂປໂລຈະຕາຍໃນຄວາມສງົບ, ຢ່າງໃດກໍຕາມ, ເພາະທ່ານຮູ້ວ່າພື້ນຖານຂອງຄຳສັນຍາຂອງພຣະເຈົ້າຈະຢູ່ໄດ້ນານກວ່າຊີວິດຂອງລາວ.

## ນຳໃຊ້ໃນຊີວິດ

ທ່ານຈະຊ່ວຍບາງຄົນໃຫ້ຈະເຣີນເຕີບໂຕໃນພຣະຄຣິສຢ່າງໃດ? ເລືອກເອົາຂໍ້ໃດຂໍ້ນຶ່ງຂອງການໃຊ້ ເພື່ອສນັບສນູນ:

- **ອະທິຖານ.** ຂໍຮ້ອງພຣະເຈົ້າເພື່ອຄົນໃດຄົນນຶ່ງຜູ້ອາດຈະຊ່ວຍແລະເປັນຜູ້ໃຫ້ຄຳປຶກສາທ່ານໃນຄວາມເຊື່ອ. ເປີດຕາຂອງທ່ານເພື່ອຄຳປຶກສາເກີດຂຶ້ນໄດ້.

  .
- **ເຊື້ອເຊີນ.** ເຊື້ອເຊີນຄົນໃດຄົນນຶ່ງແບ່ງປັນອາຫານກັບທ່ານ, ແບ່ງປັນຄຳພະຍານຂອງທ່ານ, ແລະຮຽນຮູ້ກ່ຽວກັບຄົນອື່ນ. ໄວ້ວາງໃຈອົງພຣະຜູ້ເປັນເຈົ້າບໍ່ວ່າການພົບກັນຈະເລີ້ມຕົ້ນສ້າງຄວາມສຳພັນໃຫ້ຄຳປຶກສາ.

- **ໃຫ້ຄຳໝັ້ນສັນຍາ.** ໃຫ້ຄວາມຮັບຜິດຊອບພົບປະຊຸມນຸມເປັນປົກກະຕິ ( ຢ່າງໜ້ອຍເດືອນລະຄັ້ງ) ກັບໃຜຜູ້ນຶ່ງ. ຖ້າທ່ານຕ້ອງການຊ່ວຍເຫຼືອໃນຄຳປຶກສາ. ອ່ານໜັງສືໃຫ້ການປຶກສາທີ່ຂຽນໂດຍ ຊັກ ລໍລັດ( ບົດຮຽນຊີວິດ, 2018)

ຮູບແບບຄວາມສຳພັນການເປັນຜູ້ປຶກສາທ່ານອາດຈະສິ່ງຜ່ານເທື່ອລະເລັກລະນ້ອຍເໝືອນໂປໂລແລະຕີໂມທຽວນອກຈາກຄວາມກົດດັນແລະຄວາມອຶດທົນມີຄວາມກ່ຽວຂ້ອງກັນ. ແຕ່ຕົ້ນແບບຊີວິດຂອງເຮົາຫຼັ່ງຈາກພວກເພິ່ນແລະຫຼັກຄຳສອນທີ່ສຳຄັນທີ່ພວກເພິ່ນຖ່າຍທອດອອກຈະເກີດຜົນຫຼາຍໃນປັດຈຸບັນແລະໃນອະນາຄົດ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**